ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ເລກທີ 3806 /ກຊສ

ນະຄອນຫຼວງວຽງຈັນ, ວັນທີ 29 ທັນວາ 2023

# ຂໍ້ຕົກລົງ
# ວ່າດ້ວຍການຫັນປ່ຽນປະເພດທີ່ດິນ

- ອີງຕາມກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ 573/ນຍ, ລົງວັນທີ 20 ກັນຍາ 2021;
- ອີງຕາມໜັງສືສະເໜີຂອງກົມທີ່ດິນ ສະບັບເລກທີ 6669/ກຊສ.ກທດ, ລົງວັນທີ 25 ທັນວາ 2023.

## ລັດຖະມົນຕີ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດລະບຽບການ ແລະ ຂັ້ນຕອນການຫັນປ່ຽນປະເພດທີ່ດິນ ຈາກປະເພດໜຶ່ງໄປເປັນປະເພດອື່ນ ເພື່ອຮັບປະກັນຜົນປະໂຫຍດສູງສຸດຂອງຊາດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ, ມີການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນແຕ່ລະປະເພດ ໃຫ້ຖືກຕ້ອງຕາມເປົ້າໝາຍ, ກົດໝາຍ ແລະ ລະບຽບການ ແນໃສ່ການຫັນປ່ຽນປະເພດທີ່ດິນ ໃຫ້ໄປຕາມແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນຈັດສັນທີ່ດິນຂັ້ນທ້ອງຖິ່ນ, ແຜນຍຸດທະສາດ, ແຜນການນຳໃຊ້ທີ່ດິນຂອງຂະແໜງການ ແລະ ທ້ອງຖິ່ນ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ ເກີດຜົນປະໂຫຍດສູງສຸດ ປະກອບສ່ວນເຂົ້າໃນການນຳໃຊ້ທີ່ດິນໃຫ້ຖືກຕ້ອງຕາມເປົ້າໝາຍການອານຸລັກ, ການປົກປັກຮັກສາສິ່ງແວດລ້ອມ ແລະ ພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຕາມທິດສີຂຽວ ແລະ ຍືນຍົງ.

### ມາດຕາ 2 ການຫັນປ່ຽນປະເພດທີ່ດິນ

ການຫັນປ່ຽນປະເພດທີ່ດິນ ແມ່ນ ການຫັນປ່ຽນທີ່ດິນຈາກປະເພດໜຶ່ງ ໄປເປັນທີ່ດິນປະເພດອື່ນ ຊຶ່ງຈະດຳເນີນໄດ້ກໍຕໍ່ເມື່ອຫາກເຫັນວ່າມີຄວາມຈຳເປັນນຳໃຊ້ເຂົ້າໃນເປົ້າໝາຍອື່ນ ເພື່ອຮັບໃຊ້ຜົນປະໂຫຍດສູງສຸດຂອງຊາດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ ໂດຍສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນ, ແຜນຍຸດທະສາດ ແລະ ແຜນການນຳໃຊ້ທີ່ດິນຂອງຂະແໜງການ ແລະ ທ້ອງຖິ່ນ ຊຶ່ງເປັນສ່ວນໜຶ່ງຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ໃຫ້ມີຜົນກະທົບທາງລົບໜ້ອຍທີ່ສຸດຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ.

ການຫັນປ່ຽນປະເພດທີ່ດິນ ຕ້ອງຮັບປະກັນຮັກສາເນື້ອທີ່ດິນທີ່ຈະສະຫງວນ ແລະ ອານຸລັກໄວ້ ເພື່ອເປັນເນື້ອທີ່ປ່າໄມ້ປົກຫຸ້ມ ເຈັດສິບ ເປີເຊັນ ລວມທັງທີ່ດິນບໍລິເວນນ້ຳ ທີ່ນອນຢູ່ເຂດພື້ນທີ່ດັ່ງກ່າວຂອງເນື້ອທີ່ທົ່ວປະເທດ ແລະ ເນື້ອທີ່ດິນທີ່ນຳໃຊ້ ແລະ ພັດທະນາ ສາມສິບ ເປີເຊັນ ລວມທັງທີ່ດິນບໍລິເວນນ້ຳ ທີ່ນອນຢູ່ເຂດພື້ນທີ່ດັ່ງກ່າວຂອງເນື້ອທີ່ທົ່ວປະເທດ ຕາມທີ່ໄດ້ກຳນົດໄວ້ໃນແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ແລະ ແຜນຈັດສັນທີ່ດິນຂັ້ນທ້ອງຖິ່ນ. ຖ້າມີຄວາມຈຳເປັນຫັນປ່ຽນປະເພດທີ່ດິນໃດໜຶ່ງ ເພື່ອນຳໃຊ້ເຂົ້າໃນເປົ້າໝາຍ

ອື່ນ, ຮັບໃຊ້ຜົນປະໂຫຍດສູງສຸດຂອງຊາດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ ຕ້ອງມີດິນແຮໄວ້ ເພື່ອປ່ຽນແທນທີ່ດິນປະເພດດັ່ງກ່າວ.

**ມາດຕາ 3 ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ລວມທັງຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ຄົນຕ່າງປະເທດ, ຄົນຕ່າງປະເທດທີ່ເປັນເຊື້ອຊາດລາວ ແລະ ການຈັດຕັ້ງບຸກຄົນດັ່ງກ່າວ ທີ່ດໍາລົງຊີວິດ ແລະ ເຄື່ອນໄຫວຢູ່ໃນດິນແດນ ສປປ ລາວ.

## ໝວດທີ 2
## ການຫັນປ່ຽນປະເພດທີ່ດິນ
## ເພື່ອດໍາເນີນໂຄງການລົງທຶນ ແລະ ກິດຈະການຕ່າງໆ

**ມາດຕາ 4 ການຫັນປ່ຽນປະເພດທີ່ດິນ ເພື່ອດໍາເນີນໂຄງການລົງທຶນ ແລະ ກິດຈະການຕ່າງໆ**

ການຫັນປ່ຽນປະເພດທີ່ດິນ ເພື່ອດໍາເນີນໂຄງການລົງທຶນ ແລະ ກິດຈະການຕ່າງໆ ແມ່ນ ການຫັນປ່ຽນປະເພດທີ່ດິນໜຶ່ງໄປເປັນທີ່ດິນປະເພດອື່ນ ຕາມທີ່ໄດ້ຮັບອານຸຍາດໃຫ້ເຊົ່າ ຫຼື ສໍາປະທານທີ່ດິນຂອງລັດ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ. ການຫັນປ່ຽນປະເພດທີ່ດິນດັ່ງກ່າວ ມີສອງລັກສະນະ ຄື ລັກສະນະຊົ່ວຄາວ ແລະ ລັກສະນະຖາວອນ.

ການຫັນປ່ຽນປະເພດທີ່ດິນລັກສະນະຊົ່ວຄາວ ແມ່ນ ການຫັນປ່ຽນທີ່ດິນຈາກປະເພດໜຶ່ງໄປເປັນທີ່ດິນປະເພດອື່ນ ເພື່ອດໍາເນີນກິດຈະການໃດໜຶ່ງ ພາຍຫຼັງກິດຈະການດັ່ງກ່າວສິ້ນສຸດແລ້ວ ທີ່ດິນດັ່ງກ່າວນັ້ນກໍຕ້ອງກັບຄືນມາເປັນທີ່ດິນປະເພດເດີມ ເຊັ່ນ ການຫັນປ່ຽນທີ່ດິນປ່າໄມ້ໄປເປັນທີ່ດິນອຸດສາຫະກໍາ ເພື່ອຂຸດຄົ້ນແຮ່ທາດ.

ການຫັນປ່ຽນປະເພດທີ່ດິນລັກສະນະຖາວອນ ແມ່ນ ການຫັນປ່ຽນທີ່ດິນຈາກປະເພດໜຶ່ງໄປເປັນທີ່ດິນປະເພດອື່ນ ເພື່ອຮັບໃຊ້ຈຸດປະສົງໃດໜຶ່ງທີ່ມີລັກສະນະຍາວນານ ເຊັ່ນ ການຫັນປ່ຽນທີ່ດິນກະສິກໍາໄປເປັນທີ່ດິນຄົມມະນາຄົມ ເພື່ອສ້າງຖະໜົນຫົນທາງ.

ການຄິດໄລ່ການຫັນປ່ຽນປະເພດທີ່ດິນມອບໃຫ້ກົມທີ່ດິນ, ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງ ເປັນຜູ້ດໍາເນີນການຄິດໄລ່ ຄ່າທໍານຽມ ແລະ ຄ່າບໍລິການ ກ່ຽວກັບການຫັນປ່ຽນປະເພດທີ່ດິນ ໂດຍເປັນເອກະພາບກັບຂະແໜງການຄຸ້ມຄອງນໍາໃຊ້ທີ່ດິນປະເພດທີ່ກ່ຽວຂ້ອງ. ສໍາລັບການຫັນປ່ຽນປະເພດທີ່ດິນປ່າໄມ້ ໄປເປັນທີ່ດິນປະເພດອື່ນ ແມ່ນຂະແໜງການກະສິກໍາ ແລະ ປ່າໄມ້ ເປັນຜູ້ຄິດໄລ່ຄ່າທໍານຽມ ແລະ ຄ່າບໍລິການ ໂດຍເປັນເອກະພາບກັບຂະແໜງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ.

**ມາດຕາ 5 ເອກະສານປະກອບຂໍຫັນປ່ຽນປະເພດທີ່ດິນ ເພື່ອດໍາເນີນໂຄງການລົງທຶນ ແລະ ກິດຈະການຕ່າງໆ**

ການຂໍຫັນປ່ຽນປະເພດທີ່ດິນ ເພື່ອດໍາເນີນໂຄງການລົງທຶນ ແລະ ກິດຈະການຕ່າງໆ ຕ້ອງປະກອບເອກະສານ ດັ່ງນີ້:

1. ໃບຄໍາຮ້ອງຂໍຫັນປ່ຽນປະເພດທີ່ດິນ;
2. ໃບຢັ້ງຢືນການສໍາຫຼວດວັດແທກທີ່ດິນ;
3. ເອກະສານຢັ້ງຢືນຈາກຂະແໜງການຄຸ້ມຄອງການນໍາໃຊ້ທີ່ດິນແຕ່ລະປະເພດ ແລະ ອົງການປົກຄອງຂັ້ນທ້ອງຖິ່ນທີ່ກ່ຽວຂ້ອງ;
4. ສັນຍາພັດທະນາໂຄງການ;
5. ໃບຢັ້ງຢືນຮັບຮອງບົດວິພາກເສດຖະກິດ-ເຕັກນິກ;
6. ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ;
7. ເອກະສານອື່ນ ທີ່ກ່ຽວຂ້ອງ.

**ມາດຕາ 6 ຂັ້ນຕອນການຫັນປ່ຽນປະເພດທີ່ດິນ ຕາມການຕົກລົງຂອງສະພາແຫ່ງຊາດ**

ການຫັນປ່ຽນປະເພດທີ່ດິນໜຶ່ງໄປເປັນທີ່ດິນປະເພດອື່ນ ຕາມການຕົກລົງຂອງສະພາແຫ່ງຊາດ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ໂຄງການລົງທຶນ ແລະ ກິດຈະການຕ່າງໆ ທີ່ມີຈຸດປະສົງເຊົ່າ ຫຼື ສໍາປະທານທີ່ດິນຂອງລັດ ພາຍຫຼັງສໍາເລັດບົດວິພາກເສດຖະກິດ-ເຕັກນິກ ກ່ອນຈະກ້າວໄປສູ່ການເຊັນສັນຍາສໍາປະທານ ບໍລິສັດ ຕ້ອງເຮັດໜັງສືສະແດງເຈດຈໍານົງສະເໜີຫາກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ພິຈາລະນາກ່ຽວກັບການຫັນປ່ຽນປະເພດທີ່ດິນກ່ອນ ແລະ ໃຫ້ຫ້ອງການກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ອອກແຈ້ງການຫາພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ດໍາເນີນການລົງກວດກາ ແລະ ສໍາຫຼວດ ວັດແທກພື້ນທີ່ດິນ ຕາມການສະເໜີຂໍຫັນປ່ຽນປະເພດທີ່ດິນ ໂດຍການປະສານສົມທົບກັບພະແນກການຄຸ້ມຄອງການນໍາໃຊ້ທີ່ດິນປະເພດດັ່ງກ່າວ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຮ່ວມກັບຜູ້ສະເໜີຂໍຫັນປ່ຽນປະເພດທີ່ດິນ;

2. ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງ ລາຍງານຜົນການສໍາຫຼວດ ວັດແທກ ໂດຍເປັນເອກະພາບກັບພະແນກຄຸ້ມຄອງການນໍາໃຊ້ທີ່ດິນປະເພດທີ່ກ່ຽວຂ້ອງ, ອົງການປົກຄອງຂັ້ນເມືອງ ແລະ ອົງການປົກຄອງບ້ານທີ່ກ່ຽວຂ້ອງ ເພື່ອລາຍງານ ແລະ ຢັ້ງຢືນຈາກເຈົ້າແຂວງ, ເຈົ້າຄອງນະຄອນ. ສໍາລັບພະແນກການຄຸ້ມຄອງການນໍາໃຊ້ທີ່ດິນແຕ່ລະປະເພດ ໃຫ້ລາຍງານຫາກະຊວງທີ່ຄຸ້ມຄອງການນໍາໃຊ້ທີ່ດິນ ຕາມສາຍຕັ້ງຂອງຕົນ ເພື່ອໃຫ້ລັດຖະມົນຕີກະຊວງທີ່ຄຸ້ມຄອງການນໍາໃຊ້ທີ່ດິນ ຢັ້ງຢືນການຫັນປ່ຽນປະເພດທີ່ດິນດັ່ງກ່າວໄປເປັນທີ່ດິນປະເພດອື່ນ ຫາກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ເພື່ອເປັນບ່ອນອີງລາຍງານໃຫ້ຂັ້ນເທິງພິຈາລະນາ, ໃນກໍລະນີ ຍັງບໍ່ທັນໄດ້ຮັບການຢັ້ງຢືນຈາກທ້ອງຖິ່ນ ແລະ ກະຊວງທີ່ຄຸ້ມຄອງການນໍາໃຊ້ທີ່ດິນ ໃຫ້ຫ້ອງການກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ຮ່າງໜັງສືໃນນາມລັດຖະມົນຕີ ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ເພື່ອຂໍການຢັ້ງຢືນເຫັນດີ ຈາກອົງການປົກຄອງຂັ້ນແຂວງ ແລະ ລັດຖະມົນຕີ ກະຊວງທີ່ຄຸ້ມຄອງການນໍາໃຊ້ທີ່ດິນປະເພດທີ່ກ່ຽວຂ້ອງ;

3. ພາຍຫຼັງໄດ້ຮັບການເຫັນດີຈາກອົງການປົກຄອງຂັ້ນແຂວງ ແລະ ກະຊວງທີ່ຄຸ້ມຄອງການນໍາໃຊ້ທີ່ດິນປະເພດທີ່ກ່ຽວຂ້ອງ, ຫ້ອງການ ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ປະສານສົມທົບກັບກົມກ່ຽວຂ້ອງ ພາຍໃນກະຊວງ ໂດຍແມ່ນກົມທີ່ດິນ ເປັນຜູ້ກວດກາ ແລະ ຢັ້ງຢືນທາງດ້ານວິຊາການ, ຫຼັງຈາກນັ້ນ, ກົມທີ່ດິນ ລາຍງານມາຍັງຫ້ອງການ ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ເພື່ອລາຍງານຫາລັດຖະມົນຕີ ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ພິຈາລະນາ ລາຍງານຕໍ່ລັດຖະບານ ເພື່ອສືບຕໍ່ນໍາສະເໜີສະພາແຫ່ງຊາດ ພິຈາລະນາຕົກລົງການຫັນປ່ຽນປະເພດທີ່ດິນ ຕາມກົດໝາຍ.

**ມາດຕາ 7 ຂັ້ນຕອນການຫັນປ່ຽນປະເພດທີ່ດິນ ຕາມການຕົກລົງຂອງລັດຖະບານ**

ການຫັນປ່ຽນປະເພດທີ່ດິນໜຶ່ງໄປເປັນທີ່ດິນປະເພດອື່ນ ຕາມການຕົກລົງຂອງລັດຖະບານ ໃຫ້ປະຕິບັດຕາມຂັ້ນຕອນຄືກັນກັບຂໍ້ 1 ແລະ ຂໍ້ 2 ມາດຕາ 6 ຂອງຂໍ້ຕົກລົງສະບັບນີ້. ສໍາລັບຂັ້ນຕອນທີ 3 ພາຍຫຼັງໄດ້ຮັບການເຫັນດີຈາກອົງການປົກຄອງຂັ້ນແຂວງ ແລະ ກະຊວງທີ່ຄຸ້ມຄອງການນໍາໃຊ້ທີ່ດິນປະເພດທີ່ກ່ຽວຂ້ອງ, ຫ້ອງການ ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ປະສານສົມທົບກັບກົມກ່ຽວຂ້ອງ ພາຍໃນກະຊວງ ໂດຍແມ່ນກົມທີ່ດິນ ເປັນຜູ້ກວດກາ ແລະ ຢັ້ງຢືນທາງດ້ານວິຊາການ, ຫຼັງຈາກນັ້ນ, ກົມທີ່ດິນ ລາຍງານມາຍັງຫ້ອງການ ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ເພື່ອລາຍງານຫາລັດຖະມົນຕີ ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ພິຈາລະນາ ແລະ ຮ່າງໜັງສືທາງລັດຖະການ ສະເໜີລັດຖະບານ ພິຈາລະນາ ຕົກລົງການຫັນປ່ຽນປະເພດທີ່ດິນ ຕາມກົດໝາຍ.

**ມາດຕາ 8 ຂັ້ນຕອນການຫັນປ່ຽນປະເພດທີ່ດິນ ຕາມການຕົກລົງຂອງສະພາປະຊາຊົນຂັ້ນແຂວງ**

ການຫັນປ່ຽນປະເພດທີ່ດິນໜຶ່ງໄປເປັນທີ່ດິນປະເພດອື່ນ ຕາມການຕົກລົງຂອງສະພາປະຊາຊົນຂັ້ນແຂວງ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ໂຄງການລົງທຶນ ແລະ ກິດຈະການຕ່າງໆ ທີ່ມີຈຸດປະສົງ ເຊົ່າ ຫຼື ສຳປະທານທີ່ດິນຂອງລັດ ພາຍຫຼັງສຳເລັດບົດວິພາກເສດຖະກິດ-ເຕັກນິກ ກ່ອນຈະກ້າວໄປສູ່ການເຊັນສັນຍາສຳປະທານຕາມຂອບເຂດຄວາມຮັບຜິດຊອບ ການຕົກລົງຂອງສະພາປະຊາຊົນຂັ້ນແຂວງ ບໍລິສັດ ຕ້ອງເຮັດໜັງສືສະແດງເຈດຈຳນົງ ສະເໜີຫາພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ດຳເນີນການລົງກວດກາ ແລະ ສຳຫຼວດ ວັດແທກພື້ນທີ່ດິນ ທີ່ສະເໜີຂໍຫັນປ່ຽນປະເພດທີ່ດິນ ໂດຍການປະສານສົມທົບກັບພະແນກການຄຸ້ມຄອງການນຳໃຊ້ທີ່ດິນປະເພດດັ່ງກ່າວ, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ, ອົງການປົກຄອງຂັ້ນເມືອງ ແລະ ອົງການປົກຄອງບ້ານທີ່ກ່ຽວຂ້ອງ ຮ່ວມກັບຜູ້ສະເໜີຂໍຫັນປ່ຽນປະເພດທີ່ດິນ;

2. ພາຍຫຼັງມີຄວາມເອກະພາບ ກັບພະແນກການຄຸ້ມຄອງການນຳໃຊ້ທີ່ດິນປະເພດທີ່ກ່ຽວຂ້ອງ, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ, ອົງການປົກຄອງຂັ້ນເມືອງ ແລະ ອົງການປົກຄອງບ້ານທີ່ກ່ຽວຂ້ອງ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງ ຕ້ອງໄດ້ລາຍງານເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພິຈາລະນາ ແລະ ນຳສະເໜີ ສະພາປະຊາຊົນຂັ້ນແຂວງ ພິຈາລະນາ ຕົກລົງຫັນປ່ຽນປະເພດທີ່ດິນ ຕາມກົດໝາຍ.

## ໝວດທີ 3
## ການຫັນປ່ຽນປະເພດທີ່ດິນ ເພື່ອນຳໃຊ້ເຂົ້າໃນເປົ້າໝາຍອື່ນ

### ມາດຕາ 9 ການຫັນປ່ຽນປະເພດທີ່ດິນ ເພື່ອນຳໃຊ້ເຂົ້າໃນເປົ້າໝາຍອື່ນ

ການຫັນປ່ຽນປະເພດທີ່ດິນ ເພື່ອນຳໃຊ້ເຂົ້າໃນເປົ້າໝາຍອື່ນ ແມ່ນ ຫັນປ່ຽນປະເພດທີ່ດິນໜຶ່ງໄປເປັນປະເພດທີ່ດິນອື່ນ ຕາມການຮ້ອງຂໍຂອງເຈົ້າຂອງສິດນຳໃຊ້ທີ່ດິນ ທີ່ໄດ້ກຳນົດໄວ້ໃນກົດໝາຍ ຊຶ່ງທີ່ດິນດັ່ງກ່າວບໍ່ແມ່ນທີ່ດິນຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆ.

### ມາດຕາ 10 ການປະກອບເອກະສານ ຂໍຫັນປ່ຽນປະເພດທີ່ດິນ ເພື່ອນຳໃຊ້ເຂົ້າໃນເປົ້າໝາຍອື່ນ

ການຂໍຫັນປ່ຽນປະເພດທີ່ດິນ ເພື່ອນຳໃຊ້ເຂົ້າໃນເປົ້າໝາຍອື່ນ ຕ້ອງປະກອບມີເອກະສານ ດັ່ງນີ້:

1. ໃບຄຳຮ້ອງຂໍຫັນປ່ຽນປະເພດທີ່ດິນ;
2. ສຳເນົາໃບຕາດິນ ຫຼື ໃບແຜນທີ່ຕາດິນ;
3. ສຳເນົາໃບແຈ້ງເສຍຄ່າທຳນຽມການນຳໃຊ້ທີ່ດິນ (ອາກອນທີ່ດິນ);
4. ສຳເນົາບັດປະຈຳຕົວ ຫຼື ໃບຢັ້ງຢືນທີ່ຢູ່ ແລະ ສຳມະໂນຄົວ;
5. ເອກະສານອື່ນ ທີ່ກ່ຽວຂ້ອງ.

ສຳລັບ ນິຕິບຸກຄົນ ຫຼື ການຈັດຕັ້ງ ຕ້ອງມີສຳເນົາໃບອະນຸຍາດດຳເນີນທຸລະກິດ, ໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດສ້າງຕັ້ງອົງການຈັດຕັ້ງສັງຄົມ.

### ມາດຕາ 11 ຂັ້ນຕອນການຫັນປ່ຽນປະເພດທີ່ດິນ ຕາມການຕົກລົງຂອງສະພາແຫ່ງຊາດ

ການຫັນປ່ຽນປະເພດທີ່ດິນໜຶ່ງໄປເປັນທີ່ດິນປະເພດອື່ນ ຕາມການຕົກລົງຂອງສະພາແຫ່ງຊາດ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ຜູ້ທີ່ມີຈຸດປະສົງຫັນປ່ຽນປະເພດທີ່ດິນ ເພື່ອນຳໃຊ້ເຂົ້າໃນເປົ້າໝາຍອື່ນ ຕ້ອງເຮັດໜັງສືສະແດງເຈດຈຳນົງສະເໜີຫາກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ພິຈາລະນາກ່ຽວກັບການຫັນປ່ຽນປະເພດທີ່ດິນກ່ອນ ແລະ ໃຫ້ຫ້ອງການກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ອອກແຈ້ງການຫາພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ດຳເນີນການລົງກວດກາ ແລະ ສຳຫຼວດ ວັດແທກພື້ນທີ່ດິນ ຕາມການສະເໜີຂໍຫັນປ່ຽນປະເພດທີ່ດິນ ໂດຍການປະສານສົມທົບກັບພະແນກການຄຸ້ມຄອງການນຳໃຊ້ທີ່ດິນປະເພດດັ່ງກ່າວ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຮ່ວມກັບຜູ້ສະເໜີຂໍຫັນປ່ຽນປະເພດທີ່ດິນ;

2. ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງ ລາຍງານຜົນການສຳຫຼວດວັດແທກ ໂດຍເປັນເອກະພາບກັບພະແນກຄຸ້ມຄອງການນຳໃຊ້ທີ່ດິນປະເພດທີ່ກ່ຽວຂ້ອງ, ອົງການປົກຄອງຂັ້ນ

ເມືອງ ແລະ ອົງການປົກຄອງບ້ານທີ່ກ່ຽວຂ້ອງ ເພື່ອລາຍງານ ແລະ ຢັ້ງຢືນຈາກເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ. ສໍາລັບພະແນກການຄຸ້ມຄອງການນໍາໃຊ້ທີ່ດິນແຕ່ລະປະເພດ ໃຫ້ລາຍງານຫາກະຊວງທີ່ຄຸ້ມຄອງການນໍາໃຊ້ທີ່ດິນ ຕາມສາຍຕັ້ງຂອງຕົນ ເພື່ອໃຫ້ລັດຖະມົນຕີກະຊວງທີ່ຄຸ້ມຄອງການນໍາໃຊ້ທີ່ດິນ ຢັ້ງຢືນການຫັນປ່ຽນປະເພດທີ່ດິນດັ່ງກ່າວ ໄປເປັນທີ່ດິນປະເພດອື່ນ ຫາກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ເພື່ອເປັນບ່ອນອີງລາຍງານໃຫ້ຂັ້ນເທິງພິຈາລະນາ, ໃນກໍລະນີ ຍັງບໍ່ທັນໄດ້ຮັບການຢັ້ງຢືນຈາກທ້ອງຖິ່ນ ແລະ ກະຊວງທີ່ຄຸ້ມຄອງການນໍາໃຊ້ທີ່ດິນ ໃຫ້ຫ້ອງການກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ຮ່າງໜັງສືໃນນາມລັດຖະມົນຕີ ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ເພື່ອຂໍການຢັ້ງຢືນເຫັນດີ ຈາກອົງການປົກຄອງຂັ້ນແຂວງ ແລະ ລັດຖະມົນຕີ ກະຊວງທີ່ຄຸ້ມຄອງການນໍາໃຊ້ທີ່ດິນປະເພດທີ່ກ່ຽວຂ້ອງ;

3. ພາຍຫຼັງໄດ້ຮັບການເຫັນດີຈາກອົງການປົກຄອງຂັ້ນແຂວງ ແລະ ກະຊວງທີ່ຄຸ້ມຄອງການນໍາໃຊ້ທີ່ດິນປະເພດທີ່ກ່ຽວຂ້ອງ, ຫ້ອງການ ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ປະສານສົມທົບກັບກົມກ່ຽວຂ້ອງ ພາຍໃນກະຊວງ ໂດຍແມ່ນກົມທີ່ດິນ ເປັນຜູ້ກວດກາ ແລະ ຢັ້ງຢືນທາງດ້ານວິຊາການ, ຫຼັງຈາກນັ້ນ, ກົມທີ່ດິນ ລາຍງານມາຍັງຫ້ອງການ ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ເພື່ອລາຍງານຫາລັດຖະມົນຕີ ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ພິຈາລະນາ ລາຍງານຕໍ່ລັດຖະບານ ເພື່ອສືບຕໍ່ນໍາສະເໜີສະພາແຫ່ງຊາດ ພິຈາລະນາຕົກລົງການຫັນປ່ຽນປະເພດທີ່ດິນ ຕາມກົດໝາຍ.

**ມາດຕາ 12 ຂັ້ນຕອນການຫັນປ່ຽນປະເພດທີ່ດິນ ຕາມການຕົກລົງຂອງລັດຖະບານ**

ການຫັນປ່ຽນປະເພດທີ່ດິນໜຶ່ງໄປເປັນທີ່ດິນປະເພດອື່ນ ຕາມການຕົກລົງຂອງລັດຖະບານ ໃຫ້ປະຕິບັດຕາມຂັ້ນຕອນຄືກັນກັບຂໍ້ 1 ແລະ ຂໍ້ 2 ມາດຕາ 11 ຂອງຂໍ້ຕົກລົງສະບັບນີ້. ສໍາລັບຂັ້ນຕອນທີ 3 ພາຍຫຼັງໄດ້ຮັບການເຫັນດີຈາກອົງການປົກຄອງຂັ້ນແຂວງ ແລະ ກະຊວງທີ່ຄຸ້ມຄອງການນໍາໃຊ້ທີ່ດິນປະເພດທີ່ກ່ຽວຂ້ອງ, ຫ້ອງການ ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ປະສານສົມທົບກັບກົມກ່ຽວຂ້ອງພາຍໃນກະຊວງ ໂດຍແມ່ນກົມທີ່ດິນ ເປັນຜູ້ກວດກາ ແລະ ຢັ້ງຢືນທາງດ້ານວິຊາການ, ຫຼັງຈາກນັ້ນ, ກົມທີ່ດິນລາຍງານມາຍັງຫ້ອງການ ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ເພື່ອລາຍງານຫາລັດຖະມົນຕີ ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ເພື່ອພິຈາລະນາ ແລະ ຮ່າງໜັງສືທາງລັດຖະການ ສະເໜີລັດຖະບານ ພິຈາລະນາຕົກລົງການຫັນປ່ຽນປະເພດທີ່ດິນ ຕາມກົດໝາຍ.

**ມາດຕາ 13 ຂັ້ນຕອນການຫັນປ່ຽນປະເພດທີ່ດິນ ຕາມການຕົກລົງຂອງສະພາປະຊາຊົນຂັ້ນແຂວງ**

ການຫັນປ່ຽນປະເພດທີ່ດິນໜຶ່ງໄປເປັນທີ່ດິນປະເພດອື່ນ ຕາມການຕົກລົງຂອງສະພາປະຊາຊົນຂັ້ນແຂວງ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ຜູ້ທີ່ມີຈຸດປະສົງຫັນປ່ຽນປະເພດທີ່ດິນ ເພື່ອເປົ້າໝາຍອື່ນ ຕ້ອງໄດ້ຍື່ນໜັງສືສະເໜີຂໍຫັນປ່ຽນປະເພດທີ່ດິນ ຫາຫົວໜ້າພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງ ເພື່ອພິຈາລະນາ ແລະ ໃຫ້ທົດຊີ້ນໍາຂະແໜງທີ່ດິນ ຄົ້ນຄ້ວາ, ດໍາເນີນການລົງກວດກາ ແລະ ສໍາຫຼວດ ວັດແທກພື້ນທີ່ດິນ ທີ່ສະເໜີຂໍຫັນປ່ຽນປະເພດທີ່ດິນ ໂດຍການປະສານສົມທົບກັບພະແນກການຄຸ້ມຄອງການນໍາໃຊ້ທີ່ດິນປະເພດດັ່ງກ່າວ, ຫ້ອງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ, ອົງການປົກຄອງຂັ້ນເມືອງ ແລະ ອົງການປົກຄອງບ້ານທີ່ກ່ຽວຂ້ອງ ຮ່ວມກັບຜູ້ສະເໜີຂໍຫັນປ່ຽນປະເພດທີ່ດິນ.

2. ພາຍຫຼັງມີຄວາມເອກະພາບ ກັບພະແນກການຄຸ້ມຄອງການນໍາໃຊ້ທີ່ດິນປະເພດທີ່ກ່ຽວຂ້ອງ, ຫ້ອງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ, ອົງການປົກຄອງຂັ້ນເມືອງ ແລະ ອົງການປົກຄອງບ້ານທີ່ກ່ຽວຂ້ອງ. ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງ ຕ້ອງໄດ້ລາຍງານເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພິຈາລະນາ ແລະ ນໍາສະເໜີສະພາປະຊາຊົນຂັ້ນແຂວງ ພິຈາລະນາຕົກລົງຫັນປ່ຽນປະເພດທີ່ດິນ ຕາມກົດໝາຍ.

## ໝວດທີ 4
## ການຫັນປ່ຽນປະເພດທີ່ດິນຕາມແຜນຈັດສັນທີ່ດິນຂັ້ນທ້ອງຖິ່ນ

**ມາດຕາ 14 ການຫັນປ່ຽນປະເພດທີ່ດິນຕາມແຜນຈັດສັນທີ່ດິນຂັ້ນທ້ອງຖິ່ນ**

ການຫັນປ່ຽນປະເພດທີ່ດິນ ຕາມແຜນຈັດສັນທີ່ດິນຂັ້ນທ້ອງຖິ່ນ ແມ່ນ ການຫັນປ່ຽນປະເພດທີ່ດິນໜຶ່ງໄປເປັນປະເພດທີ່ດິນອື່ນ ຕາມແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານຂັ້ນແຂວງ, ແຜນຈັດສັນທີ່ດິນຂັ້ນເມືອງ ແລະ ແຜນຈັດສັນທີ່ດິນຂັ້ນບ້ານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ການຮັບຮອງແຜນຈັດສັນທີ່ດິນຂັ້ນທ້ອງຖິ່ນ ປະກອບມີ ສາມ ຂັ້ນ ດັ່ງນີ້:

1. ແຜນຈັດສັນທີ່ດິນຂັ້ນແຂວງ ແມ່ນ ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານຂັ້ນແຂວງ ທີ່ໄດ້ຮັບຮອງຈາກສະພາປະຊາຊົນຂັ້ນແຂວງ ແລະ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ອອກຂໍ້ຕົກລົງຮັບຮອງ ແລະ ປະກາດໃຊ້ແຜນຈັດສັນທີ່ດິນດັ່ງກ່າວ ໃຫ້ສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ຕາມກົດໝາຍ ແລະ ລະບຽບການ.

2. ແຜນຈັດສັນທີ່ດິນຂັ້ນເມືອງ ແມ່ນ ແຜນຈັດສັນທີ່ດິນ ທີ່ໄດ້ຕົກລົງຮັບຮອງຈາກທ່ານເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຕາມການສະເໜີຂອງທ່ານເຈົ້າເມືອງ, ເຈົ້ານະຄອນ ໂດຍການເຫັນດີເປັນເອກະພາບຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ, ຫ້ອງການຄຸ້ມຄອງການນຳໃຊ້ທີ່ດິນແຕ່ລະປະເພດ ແລະ ອົງການປົກຄອງບ້ານທີ່ກ່ຽວຂ້ອງ. ແຜນຈັດສັນທີ່ດິນດັ່ງກ່າວ ຕ້ອງໃຫ້ສອດຄ່ອງກັບແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານຂັ້ນແຂວງ.

3. ແຜນຈັດສັນທີ່ດິນຂັ້ນບ້ານ ແມ່ນ ແຜນຈັດສັນທີ່ດິນ ທີ່ໄດ້ຕົກລົງຮັບຮອງຈາກທ່ານເຈົ້າເມືອງ, ເຈົ້ານະຄອນ ຕາມການສະເໜີຂອງຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ ໂດຍເປັນເອກະພາບກັບຫ້ອງການຄຸ້ມຄອງການນຳໃຊ້ທີ່ດິນແຕ່ລະປະເພດ ແລະ ອົງການປົກຄອງບ້ານທີ່ກ່ຽວຂ້ອງ. ແຜນຈັດສັນທີ່ດິນດັ່ງກ່າວ ຕ້ອງໃຫ້ສອດຄ່ອງກັບແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານຂັ້ນແຂວງ ແລະ ແຜນຈັດສັນທີ່ດິນຂັ້ນເມືອງ.

ການຫັນປ່ຽນປະເພດທີ່ດິນຕາມແຜນຈັດສັນທີ່ດິນຂັ້ນທ້ອງຖິ່ນ ທີ່ໄດ້ຮັບຮອງຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ຫຼື 2 ຫຼື/ແລະ 3 ຂອງຂ້າງເທິງນີ້ ແມ່ນໃຫ້ດຳເນີນການຫັນປ່ຽນປະເພດທີ່ດິນດັ່ງກ່າວ ໂດຍບໍ່ຕ້ອງໄປຜ່ານສະພາປະຊາຊົນຂັ້ນແຂວງ ພິຈາລະນາຮັບຮອງຄືນ. ແຕ່ຜູ້ສະເໜີການຫັນປ່ຽນປະເພດທີ່ດິນ ຕ້ອງໄດ້ເສຍຄ່າທຳນຽມ ແລະ ຄ່າບໍລິການ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 15 ການປະກອບເອກະສານການຫັນປ່ຽນປະເພດທີ່ດິນຕາມແຜນຈັດສັນທີ່ດິນຂັ້ນທ້ອງຖິ່ນ**

ເຈົ້າຂອງສິດນຳໃຊ້ທີ່ດິນ ມີສິດຫັນປ່ຽນປະເພດທີ່ດິນຂອງຕົນ ຕາມແຜນຈັດສັນທີ່ດິນຂັ້ນທ້ອງຖິ່ນ ຕ້ອງປະກອບເອກະສານ ດັ່ງນີ້:

1. ໃບຄຳຮ້ອງຂໍຫັນປ່ຽນປະເພດທີ່ດິນ;
2. ສຳເນົາໃບຕາດິນ ຫຼື ໃບແຜນທີ່ຕາດິນ;
3. ສຳເນົາໃບແຈ້ງເສຍຄ່າທຳນຽມການນຳໃຊ້ທີ່ດິນ (ອາກອນທີ່ດິນ);
4. ສຳເນົາບັດປະຈຳຕົວ ຫຼື ໃບຢັ້ງຢືນທີ່ຢູ່ ແລະ ສຳມະໂນຄົວ;
5. ເອກະສານອື່ນ ທີ່ກ່ຽວຂ້ອງ.

ສຳລັບ ນິຕິບຸກຄົນ ຫຼື ການຈັດຕັ້ງ ຕ້ອງມີສຳເນົາໃບອະນຸຍາດດຳເນີນທຸລະກິດ, ໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດສ້າງຕັ້ງອົງການຈັດຕັ້ງສັງຄົມ.

ການຫັນປ່ຽນປະເພດທີ່ດິນ ສາມາດດຳເນີນການຫັນປ່ຽນຢ່າງເປັນລະບົບກໍ່ໄດ້ ເພື່ອໃຫ້ສອດຄ່ອງກັບແຜນຈັດສັນທີ່ດິນຂັ້ນທ້ອງຖິ່ນ.

**ມາດຕາ 16 ຂັ້ນຕອນການຫັນປ່ຽນປະເພດທີ່ດິນ ຕາມແຜນຈັດສັນທີ່ດິນຂັ້ນທ້ອງຖິ່ນ**

ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງ ປະສານສົມທົບກັບພະແນກການຄຸ້ມຄອງນຳໃຊ້ທີ່ດິນແຕ່ລະປະເພດ, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ, ອົງການປົກຄອງຂັ້ນເມືອງ ແລະ ອົງການປົກຄອງບ້ານທີ່ກ່ຽວຂ້ອງ ດຳເນີນການກວດກາຕາມແຜນຈັດສັນທີ່ດິນຂັ້ນແຂວງ ຫຼື ຂັ້ນເມືອງ ຫຼື/ແລະ ຂັ້ນບ້ານ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 14 ຂອງຂໍ້ຕົກລົງສະບັບນີ້. ຫຼັງຈາກນັ້ນພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງ ແຈ້ງຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ ປະສານສົມທົບກັບຫ້ອງການ ແລະ ອົງການປົກຄອງບ້ານທີ່ກ່ຽວຂ້ອງ ດຳເນີນການຫັນປ່ຽນປະເພດທີ່ດິນ.

## ໝວດທີ 5
## ຄ່າທຳນຽມ ແລະ ຄ່າບໍລິການ ກ່ຽວກັບການຫັນປ່ຽນປະເພດທີ່ດິນ

**ມາດຕາ 17 ຄ່າທຳນຽມກ່ຽວກັບການຫັນປ່ຽນປະເພດທີ່ດິນ**

ຄ່າທຳນຽມກ່ຽວກັບການຫັນປ່ຽນປະເພດທີ່ດິນ ຈາກປະເພດໜຶ່ງໄປເປັນປະເພດອື່ນ ແມ່ນ ຄ່າທີ່ເກັບເປັນເງິນຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ສະເໜີຫັນປ່ຽນປະເພດທີ່ດິນ ຈາກປະເພດໜຶ່ງໄປເປັນປະເພດອື່ນ. ການເກັບ ແລະ ການມອບ ຄ່າທຳນຽມກ່ຽວກັບຫັນປ່ຽນປະເພດທີ່ດິນ ໃຫ້ປະຕິບັດຕາມລັດຖະບັນຍັດປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ແຕ່ລະໄລຍະ.

**ມາດຕາ 18 ຄ່າບໍລິການກ່ຽວກັບການຫັນປ່ຽນປະເພດທີ່ດິນ**

ຄ່າບໍລິການກ່ຽວກັບການຫັນປ່ຽນປະເພດທີ່ດິນ ຈາກປະເພດໜຶ່ງໄປເປັນປະເພດອື່ນ ແມ່ນ ຄ່າທີ່ເກັບເປັນເງິນຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ສະເໜີຫັນປ່ຽນປະເພດທີ່ດິນ ຈາກປະເພດໜຶ່ງໄປເປັນປະເພດອື່ນ. ການເກັບ ແລະ ການມອບ ຄ່າບໍລິການ ກ່ຽວກັບຫັນປ່ຽນປະເພດທີ່ດິນ ໃຫ້ປະຕິບັດຕາມລັດຖະບັນຍັດປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ແຕ່ລະໄລຍະ ພ້ອມທັງປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 19 ການຈັດຕັ້ງປະຕິບັດ**

ກົມທີ່ດິນ ເປັນເຈົ້າການປະສານສົມທົບກັບບັນດາກົມກອງພາຍໃນກະຊວງ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງ ແລະ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ເປັນຜູ້ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມື ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 20 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ພາຍຫຼັງລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກຳນົດ ຫຼື ບົດບັນຍັດໃດທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ອນແຕ່ຖືກຍົກເລີກ.

**ລັດຖະມົນຕີ**

**ນ.ບຸນຄຳ ວໍລະຈິດ**